ສິດຂອງຜູ້ໄດ້ຮັບສິດນຳໃຊ້ທີ່ດິນ


ໄດ້ຮັບໝາກຜົນຈາກທີ່ດິນ
ສືບທອດສິດນຳໃຊ້ທີ່ດິນ
ດິນຂອງພວກເຮົາ ໄດ້ນຳໃຊ້ໝົດທຸກຕອນ ບໍ່ເຖົ້າ
ຕ້ອງການຂາຍດິນ ໂທ: 88888888
ແມ່ນແລ້ວ ຕໍ່ໄປ ລູກໆກໍ່ຈະສືບທອດ ຈາກເຮົາ
ໃຊ້ຝຸ່ນຄອກເພື່ອ ຮັກສາຄຸນນະພາບຂອງດິນ
ຂີ້ງົວ
ຊົມໃຊ້ທີ່ດິນ

ສາມາດດາວໂຫຼດຜ່ານ QR Code ນີ້

ຜູ້ໄດ້ຮັບສິດນຳໃຊ້ທີ່ດິນມີສິດດັ່ງນີ້:

1. **ປົກປັກຮັກສາທີ່ດິນ**
   ສິດປົກປັກຮັກສາທີ່ດິນແມ່ນສິດໃນການຄຸ້ມຄອງ, ຮັກສາທີ່ດິນເພື່ອໃຊ້ເຂົ້າໃນເປົ້າໝາຍໃດໜຶ່ງທີ່ແນ່ນອນ.
2. **ຊົມໃຊ້ທີ່ດິນ**
   ສິດຊົມໃຊ້ທີ່ດິນແມ່ນສິດໃນການນຳໃຊ້ທີ່ດິນເຂົ້າໃນເປົ້າໝາຍໃດໜຶ່ງເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຜູ້ໄດ້ຮັບສິດນຳໃຊ້ທີ່ດິນຕາມການຈັດສັນທີ່ດິນຂອງລັດ ແລະ ກົດໝາຍໂດຍບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ.
3. **ໄດ້ຮັບໝາກຜົນຈາກທີ່ດິນ**
   ສິດໄດ້ຮັບໝາກຜົນຈາກທີ່ດິນແມ່ນສິດເກັບກູ້ໝາກຜົນ ຫຼື ລາຍໄດ້ຈາກທີ່ດິນທີ່ຕົນໄດ້ຮັບສິດນຳໃຊ້ນັ້ນເປັນຕົ້ນຜົນຜະລິດ, ຄ່າເຊົ່າ, ການຄ້ຳປະກັນ.
4. **ໂອນສິດນຳໃຊ້ທີ່ດິນ**
   ສິດໂອນສິດນຳໃຊ້ທີ່ດິນແມ່ນສິດໃນການເອົາສິດນຳໃຊ້ທີ່ດິນໃຫ້ຜູ້ອື່ນດ້ວຍການຂາຍ, ມອບ, ຍົກ ຫຼື ແລກປ່ຽນສິດນຳໃຊ້ທີ່ດິນ, ການເອົາເຂົ້າໄປເປັນຮຸ້ນ.
5. **ສືບທອດສິດນຳໃຊ້ທີ່ດິນ**
   ສິດສືບທອດສິດນຳໃຊ້ທີ່ດິນແມ່ນສິດໄດ້ຮັບສິດນຳໃຊ້ທີ່ດິນຂອງເຈົ້າມູນມໍຣະດົກທີ່ໄດ້ເສຍຊີວິດ ຊຶ່ງຕົກທອດມາຍັງຜູ້ມີສິດສືບທອດ ຕາມກົດໝາຍ ຫຼື ພິໄນກຳ.

(ກົດໝາຍ ວ່າດ້ວຍທີ່ດິນ (ສະບັບປັບປຸງ), ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019, ມາດຕາ 134, 135, 136, 137, 138)

ຄພດກ DALaM Department of Agricultural Land Management
VILLAGE FOCUS INTERNATIONAL www.villagefocus.org
ໂຄງການສົ່ງເສີມການຮຽນຮູ້ກ່ຽວກັບທີ່ດິນ LIFE
ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG
Brot für die Welt
ສະຫະພາບ ເອີຣົບ European Union